# ມິຊຊາອາທິດທີ 2 ກຳນົດທຳມະດາ B
## ວັນທີ 17 ມັງກອນ 2021



**ພຣະວໍຣະສານໂດຍນັກບຸນຢວງ 1, 35-42**

ຫລັງຈາກທີ່ພຣະເຢຊູເຈົ້າໄດ້ຮັບສິນລ້າງແລ້ວ, ມື້ຕໍ່ມາຢວງບາບຕິສຕາຍັງຢູ່ທີ່ນັ້ນກັບລູກສິດສອງຄົນ, ເມື່ອຫລຽວເຫັນພຣະເຢຊູເຈົ້າສະເດັດກາຍໄປເພິ່ນກໍເວົ້າວ່າ: "ນັ້ນເດ! ພຣະຊຸມພານ້ອຍຂອງພຣະເຈົ້າ". ລູກສິດທັງສອງ ໄດ້ຍິນຄຳນີ້ກໍພາກັນຕິດຕາມພຣະອົງໄປ. ພຣະເຢຊູເຈົ້າຫລຽວຄືນຫລັງເຫັນພວກເຂົາຍ່າງມານຳຈຶ່ງຖາມວ່າ: "ພວກເຈົ້າພາກັນຊອກຫາຫຍັງ?" ພວກເຂົາທູນຕອບວ່າ: "ຮັບບີ" *(ແປວ່າ ອາຈານ)* ພັກເຊົາຢູ່ໃສ? ພຣະອົງຊົງກ່າວວ່າ: "ຈົ່ງມາແລະພວກເຈົ້າກໍຈະເຫັນ". ພວກເຂົາກໍນຳພຣະອົງໄປ ແລະໄດ້ເຫັນບ່ອນພັກເຊົາຂອງພຣະອົງ. ເວລານັ້ນເປັນເວລາປະມານບ່າຍສີ່ໂມງ, ແລ້ວພວກເຂົາຈຶ່ງໄດ້ພັກເຊົາຢູ່ນຳພຣະອົງ.

ອັນເດຣນ້ອງຊາຍຂອງຊີມອນເປໂຕເປັນຜູ້ໜຶ່ງໃນຈຳນວນລູກສິດສອງຄົທີ່ໄດ້ຍິນ ຢວງບາບຕິສຕາ ແລະເປັນຜູ້ຕິດຕາມພຣະເຢຊູເຈົ້າໄປ. ອັນເດຣເຫັນຊີມອນອ້າຍຂອງຕົນກ່ອນໝູ່ຈຶ່ງບອກວ່າ: "ພວກເຮົາໄດ້ພົບພຣະເມຊີອາ *(ແປວ່າ ພຣະກຣິສໂຕ)* ແລ້ວ". ແລະເພິ່ນໄດ້ພາອ້າຍໄປຫາພຣະເຢຊູເຈົ້າ, ພຣະອົງຫລຽວເຫັນເປໂຕກໍກ່າວວ່າ: "ເຈົ້າຄືຊີມອນ ບຸດຂອງຢວງ, ເຈົ້າຈະໄດ້ຊື່ວ່າ "ເກຟາດ" ອັນໝາຍຄວາມວ່າຫີນສີລາ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 1, 35-42**

ອາທິດທີ່ຜ່ານມາ, ພວກເຮົາໄດ້ສະຫລຸບກຳນົດພຣະກຣິສຕະສົມພົບດ້ວຍງານສະຫລອງພຣະກຣິສໂຕຮັບສິນລ້າງ ອັນແມ່ນຈຸດເລີ່ມຕົ້ນແຫ່ງພາລະກິດການປະກາດເທດສອນຂອງພຣະເຢຊູເຈົ້າຢູ່ໃນແຜ່ນດິນນີ້.

ວັນອາທິດນີ້, ພວກເຮົາກ້າວເຂົ້າສູ່ອາທິດທີສອງກຳນົດທຳມະດາເພື່ອຕິດຕາມພຣະເຢຊູຜູ້ເປັນພຣະຊຸມພານ້ອຍຂອງພຣະເຈົ້າ. ເພື່ອຈະຕິດຕາມພຣະເຢຊູເຈົ້າໄດ້ ພວກເຮົາຕ້ອງຮູ້ຈັກຟັງສຽງຂອງພຣະອົງ ແລະຕອບຕໍ່ສຽງຮຽກເອີ້ນນັ້ນ.

ດັ່ງໃນບົດອ່ານທີໜຶ່ງຈາກໜັງສືຂອງຊາມູແອນຊຶ່ງພວກເຮົາໄດ້ຟັງວັນນີ້. ຊາມູແອນເປັນຊາຍໜຸ່ມທີ່ອາໄສຢູ່ໃນພຣະວິຫານກັບເອລີຜູ້ເປັນສົງ. ວັນໜຶ່ງພຣະເຈົ້າໄດ້ເອີ້ນຊາມູແອນແຕ່ລາວບໍ່ຮູ້ວ່າແມ່ນພຣະເຈົ້າ. ແລະຊາມູແອນກໍໄດ້ຕອບຮັບສຽງຮຽກເອີ້ນນັ້ນດ້ວຍຄວາມສະໝັກໃຈວ່າ: “ໂດຍຂ້ານ້ອຍຢູ່ນີ້”. ພຣະເຈົ້າກໍສືບຕໍ່ຮຽກເອີ້ນຊາມູແອນເຖິງສາມຄັ້ງ. ໃນທີ່ສຸດ, ເອລີຜູ້ເປັນສົງກໍຮູ້ວ່າແມ່ນພຣະເຈົ້າທີ່ໄດ້ຮຽກເອີ້ນຊາມູແອນ.ແລະເອລີກໍບອກກັບຊາມູແອນວ່າຖ້າເຈົ້າໄດ້ຍິນສຽງເອີ້ນອີກໃຫ້ເຈົ້າຕອບກັບເພິ່ນວ່າ: “ໂອພຣະອົງເຈົ້າ ເຊີນກ່າວມາເຖີດຂ້າໃຊ້ຂອງພຣະອົງກຳລັງຟັງຢູ່”. ໃນທີ່ນີ້, ພວກເຮົາເຫັນວ່າແມ່ນເອລີທີ່ໄດ້ຊ່ວຍຊາມູແອນໃຫ້ເຂົ້າໃຈວ່າແມ່ນພຣະເຈົ້າເປັນຜູ້ຮຽກເອີ້ນລາວ.

ເໝືອນກັບພຣະວໍລະສານວັນນີ້, ແມ່ນຢວງບັບຕິສຕາທີ່ໄດ້ຊີ້ໃຫ້ລູກສິດສອງຄົນຂອງທ່ານຮູ້ວ່າພຣະເຢຊູແມ່ນພຣະຊຸມພານ້ອຍຂອງພຣະເຈົ້າ. ຈາກນັ້ນ, ລູກສິດທັງສອງຂອງທ່ານກໍຕິດຕາມພຣະເຢຊູເຈົ້າໄປ. ໜຶ່ງໃນລູກສິດທັງສອງຄົນນີ້ມີຊື່ວ່າອັນເດຣ. ເມື່ອເຫັນຊີມອນເປໂຕຜູ້ເປັນອ້າຍຂອງຕົນມາເຖິງ, ລາວກໍພາຊີມອນໄປຫາພຣະເຢຊູເຈົ້າ. ແລະພຣະອົງກໍໄດ້ເອີ້ນຊີມອນໃຫ້ຕິດຕາມພຣະອົງໄປ.

ສິ່ງທີ່ກ່າວມາຂ້າງເທິງນີ້ສະທ້ອນໃຫ້ເຫັນວ່າ ພວກເຮົາແຕ່ລະຄົນບໍ່ພຽງແຕ່ຕ້ອງຮູ້ຈັກຟັງສຽງຮຽກເອີ້ນຂອງພຣະເຈົ້າແລະຕອບຕໍ່ສຽງຮຽກຂອງພຣະອົງເທົ່ານັ້ນ, ແຕ່ພວກເຮົາຍັງມີໜ້າທີ່ຕ້ອງຊ່ວຍຄົນອື່ນໃຫ້ຟັງແລະຮູ້ຈັກສຽງເອີ້ນຂອງພຣະເຈົ້າອີກດ້ວຍ. ນີ້ແລແມ່ນໜ້າທີ່ຂອງຜູ້ເປັນກຣິສຕັງ, ເປັນສິດຂອງພຣະເຢຊູເຈົ້າ.

**ພາວະນາ**

ໂອພຣະເຈົ້າ ໂຜດຊ່ວຍລູກໃຫ້ຮັບຟັງແລະຕອບຕໍ່ສຽງຮຽກເອີ້ນຂອງພຣະອົງໃນຊີວິດຂອງລູກ, ເພື່ອລູກຈະໄດ້ຕິດຕາມພຣະອົງໄປແລະຊ່ວຍຄົນອື່ນໃຫ້ຮູ້ຈັກແລະມາເປັນສິດຂອງພຣະອົງດ້ວຍ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ